ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

## ການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ

# ຫັນຮ້ານແລກປ່ຽນເງິນຕາ ເປັນຕົວແທນທະນາຄານທຸລະກິດ



ໃນການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໄດ້ມີການປັບປຸງກົນໄກການຄຸ້ມຄອງເງິນຕາຕ່າງປະເທດໃນຫຼາຍຂອດ. ໃນນັ້ນ, ຕິດພັນກັບການຄຸ້ມຄອງອັດຕາແລກປ່ຽນ ແລະ ຮ້ານແລກປ່ຽນເງິນຕາ, ທະນາຄານແຫ່ງ ສປປ ລາວ ໄດ້ຫັນຮ້ານແລກປ່ຽນເງິນຕາທີ່ໄດ້ຮັບອະນຸຍາດຜ່ານມາໃຫ້ເປັນຕົວແທນຂອງທະນາຄານທຸລະກິດ, ຊຶ່ງມາຮອດປະຈຸບັນ ການປັບປຸງກົນໄກດັ່ງກ່າວໄດ້ສຳເລັດແລ້ວ.

ເພື່ອເຮັດໃຫ້ການດຳເນີນທຸລະກິດແລກປ່ຽນເງິນຕາມີຄວາມເປັນລະບຽບຮຽບຮ້ອຍ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ຮັບປະກັນການຈັດຕັ້ງປະຕິບັດຕາມທິດທາງປ່ຽນແປງໃໝ່ ໃຫ້ມີປະສິດທິຜົນເປັນຢ່າງດີ. ໃນຕົ້ນປີ 2022 ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສົມທົບກັບ ກົມຕຳຫຼວດເສດຖະກິດ ແລະ ທະນາຄານທຸລະກິດ ລົງຕິດຕາມກວດກາຮ້ານແລກປ່ຽນເງິນຕາທີ່ເປັນຕົວແທນຂອງທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດ ແລະ ບໍ່ໄດ້ຮັບອະນຸຍາດໃນຂອບເຂດນະຄອນຫຼວງວຽງຈັນ. ການລົງຕິດຕາມກວດກາດັ່ງກ່າວ ເປັນການຈັດຕັ້ງປະຕິບັດຕາມແຜນງານການຄຸ້ມຄອງເງິນຕາຕ່າງປະເທດປະຈຳປີ 2022 ເວົ້າລວມ ເວົ້າສະເພາະກໍ່ຄືການຫັນຮ້ານແລກປ່ຽນເງິນຕາ ໄປເປັນຕົວແທນຂອງບັນດາທະນາຄານທຸລະກິດຕາມແຈ້ງການສະບັບເລກທີ 111/ທຫລ ລົງວັນທີ 12 ສິງຫາ 2021 ເພື່ອຫັນການຊື້-ຂາຍເງິນຕາຕ່າງປະເທດສູ່ລະບົບທະນາຄານຫຼາຍຂຶ້ນ ເຮັດໃຫ້ການຄຸ້ມຄອງເງິນຕາຕ່າງປະເທດມີປະສິດທິຜົນສາມາດປະກອບສ່ວນເຂົ້າໃນການພັດທະນາ ແລະ ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ-ເງິນຕາໄດ້ດີ ແລະ ທັນສະພາບກວ່າເກົ່າ.

ການລົງກວດກາໃນຄັ້ງນີ້ ໄດ້ສຸມໃສ່ຕິດຕາມການເຄື່ອນໄຫວການດຳເນີນທຸລະກິດຮ້ານແລກປ່ຽນເງິນຕາທີ່ເປັນຕົວແທນ ຂອງທະນາຄານທຸລະກິດໃຫ້ຖືກຕ້ອງຕາມລະບຽບການທີ່ໄດ້ກຳນົດໄວ້ເປັນຕົ້ນແມ່ນ: ການຂຶ້ນປ້າຍຮ້ານແລກປ່ຽນເງິນຕາຕົວແທນຂອງທະນາຄານທຸລະກິດ, ການກຳນົດອັດຕາແລກປ່ຽນ ຕ້ອງໃຫ້ຕ່ຳກວ່າ ຫຼື ເທົ່າກັບທະນາຄານທຸລະກິດທີ່ຕົນໄດ້ເປັນຕົວແທນ ພ້ອມທັງການລາຍງານຂໍ້ມູນການຊື້-ຂາຍປະຈຳວັນ ແລະ ອື່ນໆ ເພື່ອໃຫ້ສອດຄ່ອງຕາມລະບຽບການທີ່ກຳນົດ. ພ້ອມດຽວກັນນີ້, ຍັງໄດ້ລົງຕິດຕາມກວດກາການດຳເນີນທຸລະກິດແລກປ່ຽນເງິນຕາໂດຍບໍ່ໄດ້ຮັບອະນຸຍາດ ຫຼື ຮ້ານແລກປ່ຽນເງິນຕາທີ່ບໍ່ໄດ້ເຊັນສັນຍາເປັນຕົວແທນທະນາຄານທຸລະກິດ ໂດຍສະເພາະຢູ່ເຂດຕະຫຼາດຊົ່ວຈຽງ, ສູນການຄ້າເຂດໜອງຈັນ ແລະ ເຂດໜອງດ້ວງ, ຊຶ່ງສາມາດກວດກາໄດ້ ຈຳນວນ 23 ຮ້ານ ແລະ ເຮັດບົດບັນທຶກກັບຮ້ານທີ່ໄດ້ດຳເນີນທຸລະກິດແລກປ່ຽນເງິນຕາໂດຍບໍ່ໄດ້ຮັບອະນຸຍາດ ຈຳນວນ 9 ຮ້ານ.

ຜ່ານການລົງຕິດຕາມກວດກາເຫັນວ່າ ຮ້ານແລກປ່ຽນເງິນຕາທີ່ເປັນຕົວແທນຂອງທະນາຄານທຸລະກິດສ່ວນໃຫຍ່ແມ່ນສາມາດປະຕິບັດຕາມລະບຽບການທີ່ກຳນົດໄດ້ໂດຍພື້ນຖານ ໂດຍສະເພາະການຂຶ້ນປ້າຍຮ້ານແລກປ່ຽນເງິນຕາຕົວແທນ, ແຕ່ກໍ່ມີຮ້ານແລກປ່ຽນເງິນຕາທີ່ຍັງບໍ່ໄດ້ເປັນຕົວແທນທະນາຄານທຸລະກິດ ທີ່ຍັງສືບຕໍ່ດຳເນີນທຸລະກິດ, ຊຶ່ງທາງຄະນະລົງກວດກາໄດ້ເຮັດບົດບັນທຶກກ່າວເຕືອນໃຫ້ຢຸດດຳເນີນທຸລະກິດ ແລະ ຈະສືບຕໍ່ຕິດຕາມລົງກວດກາຄືນ, ກໍລະນີຫາກພົບເຫັນຍັງສືບຕໍ່ເຄື່ອນໄຫວທຸລະກິດແລກປ່ຽນເງິນຕາຈະຖືກດຳເນີນມາດຕະການຕາມລະບຽບການ.





**#ບົດ ແລະ ພາບໂດຍ: ກົມນະໂຍບາຍເງິນຕາ**

ເສດຖະກິດຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ